ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 1495 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 19 MAY 2025

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ, ວິສາຫະກິດ ຈັດຈໍາໜ່າຍ, ຕິດຕັ້ງ ແລະ ສ້ອມແປງແອເຢັນ.

**ເລື່ອງ:** ແຈ້ງເຊີນປະມູນຮັບເໝົາບໍາລຸງຮັກສາແອເຢັນຫ້ອງເກັບອຸປະກອນໄອທີ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເຂົ້າຮ່ວມຍື່ນຊອງປະມູນລາຄາບໍາລຸງຮັກສາແອເຢັນຫ້ອງເກັບອຸປະກອນໄອທີ ທຄຕລ ຈໍານວນ 45 ຊຸດ ດັ່ງລາຍລະອຽດລຸ່ມນີ້:

## 1. ລາຍລະອຽດໜ້າວຽກ:

| ລ/ດ | ສະຖານທີ່ | ຂະໜາດແອ | ຈໍານວນ | ໝາຍເຫດ |
|---|---|---|---|---|
| 01 | ຫ້ອງ Server ສໍານັກງານໃຫຍ່ | ແອຕູ້ຕັ້ງ Gree 96.000 BTU | 04 ຊຸດ | - ກວດເຊັກການທໍາງານຂອງແຜງຮ້ອນ ແລະ ແຜງເຢັນ, ວັດແທກອຸນະພູມຄວາມເຢັນ, ວັດແທກກະແສໄຟຂອງຄອມເພຼດເຊີ, ກວດເຊັກປະລິມານນໍ້າຢາ ,ກວດເຊັກສາຍພານຂອງໂມເຕີແຜງເຢັນ ຂອງແອ 1ເດືອນ/ຄັ້ງ<br>- ລ້າງອັດສີດແຜງຮ້ອນ ແລະ ລ້າງຝຸ່ນເຕີແຜງເຢັນ 2 ເດືອນ/ຄັ້ງ |
| | | ແອດັກ 120.000 BTU | 02 ຊຸດ | |
| | | ແອເປືອຍ Gree 60.000 BTU | 02 ຊຸດ | |
| | | ແອດັກ Gree120.000 BTU | 01 ຊຸດ | |
| | | ແອດັກ Gree 60.000 BTU | 02 ຊຸດ | |
| | | ແອວໍທາຍ Gree 36.000 BTU | 01 ຊຸດ | |
| | | ແອເປືອຍ Gree 60.000 BTU | 01 ຊຸດ | |
| | | ແອຕູ້ຕັ້ງ Gree 60.000 BTU | 01 ຊຸດ | |
| | | ແອເປືອຍ Gree 60.000 BTU | 01 ຊຸດ | |
| | | ແອຕູ້ຕັ້ງ Gree 36.000 BTU | 02 ຊຸດ | |
| | | ແອເປືອຍ Gree 60.000 BTU | 02 ຊຸດ | |
| | | ແອຕູ້ຕັ້ງ Gree 48.000 BTU | 01 ຊຸດ | |
| | | ວໍທາຍອາມີນາ 48.000 BTU | 01 ຊຸດ | |
| 02 | ຫ້ອງເກັບເຄື່ອງອຸປະກອນໄອທີ ສໍານັກງານໃຫຍ່ | ແອ AK ມິຊູ 48.000 BTU | 02 ຊຸດ | - ກວດເຊັກການທໍາງານຂອງແຜງຮ້ອນ ແລະ ແຜງເຢັນ, ວັດແທກອຸນະພູມຄວາມເຢັນ, ວັດແທກກະແສໄຟຂອງຄອມເພຼດເຊີ,ກວດເຊັກປະລິມານນໍ້າຢາ 3ເດືອນ/ຄັ້ງ<br>- ລ້າງອັດສີດແຜງຮ້ອນ ແລະ ແຜງເຢັນ 3 ເດືອນ/ຄັ້ງ |
| | | ແອດັກ Gree 60.000 BTU | 02 ຊຸດ | |
| | | ແອວໍທາຍ Gree 36.000 BTU | 01 ຊຸດ | |
| | | ແອວໍທາ Daikin 18.000 BTU | 01 ຊຸດ | |
| | | ແອເປືອຍເທນ 60.000 BTU | 02 ຊຸດ | |
| | | ແອວໍທາ Daikin18.000 BTU | 01 ຊຸດ | |
| | | ແອວໍທາຍ Gree 24.000 BTU | 01 ຊຸດ | |
| | | ແອວໍທາຍ Eminent 12.000 BTU | 01 ຊຸດ | |
| | | ແອວໍທາຍ Gree24.000 BTU | 02 ຊຸດ | |
| | | ແອວໍທາຍ Gree18.000 BTU | 02 ຊຸດ | |
| | | ແອວໍທາຍ Eminent18.000 BTU | 02 ຊຸດ | |
| | | ແອຕູ້ຕັ້ງ Gree 36.000 BTU<br>ແອວໍທາຍ Gree36.000 BTU | 01 ຊຸດ<br>01 ຊຸດ | |
| | | ແອວໍທາຍ Gree12.000 BTU | 02 ຊຸດ | |



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | | |
|---|---|---|---|---|
| | | ແອວໍທາຍ Gree 9.000 BTU | 02 ຊຸດ | |
| | | ແອວໍທາຍ Gree 12.000 BTU | 01 ຊຸດ | |
| **ລວມທັງໝົດ** | | | **45 ຊຸດ** | |

ໝາຍເຫດ: ສະເໜີໃຫ້ບໍລິສັດເຂົ້າມາສຳຫຼວດຕົວຈິງ

2. **ລາຍລະອຽດການປະກອບເອກະສານ:**

➢ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

- ປະກອບເອກະສານໃນນາມນິຕິບຸກຄົນທີ່ດຳເນີນທຸລະກິດໃຫ້ບໍລິການຈັດຈຳໜ່າຍອຸປະກອນໄອທີ ຫຼື ໄຟຟ້າດຳເນີນທຸລະກິດຢ່າງໜ້ອຍ 3 ປີຂຶ້ນໄປ (ສຳເນົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການເສຍອາກອນ ປະຈຳປີ 2023/2024) ພ້ອມໃບຢັ້ງຢືນຜົນງານ ແລະ ປະສົບການທີ່ຜ່ານມາ;
- ກຳນົດຍື່ນ ຊອງທີ 1 ລະຫວ່າງວັນທີ **19/05/2025-06/06/2025** ເວລາ **8:30 – 15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງຂາເຂົ້າ-ຂາອອກ ອາຄານ C ຊັ້ນ 4.

➢ **ເອກະສານ ຊອງທີ 2 (ປິດຊອງ):**

- ໃບສະເໜີລາຄາ 1 ຊຸດ ເຊິ່ງລາຄາແມ່ນໃຫ້ ລະບຸລາຄາສະເລ່ຍຕໍ່ໜ່ວຍ/ຄັ້ງ ໂດຍບໍ່ແຍກຍີ່ຫໍ້ ແລະ ຄວາມແຮງຂອງແອ, ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນ ມູນຄ່າເພີ່ມ 10% ເຊິ່ງລາຄາດັ່ງກ່າວແມ່ນສະເພາະແຕ່ຄ່າແຮງງານ ໂດຍບໍ່ລວມຄ່າອາໄຫຼ່ ໃນການສ້ອມແປງ ຫຼື ປ່ຽນຖ່າຍ;
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດຕາມສັນຍາ (ມູນຄ່າທັງໝົດ = ລາຄາຕໍ່ໜ່ວຍ x ຈຳນວນແອ x 1 ປີ) ໂດຍໜັງສືຄ້ຳ ປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 20/09/2025) ຫຼື ແຊັກທີ່ວີຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ດັ່ງກ່າວຄືນ;
- ໃນວັນທີ **10/06/2025** ເວລາ **09:00 ໂມງ** ແມ່ນມື້ເປີດຊອງລາຄາປະມູນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍ ຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

3. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1) ເຮັດສັນຍາກັບບໍລິສັດທີ່ຄົບເງື່ອນໄຂມາດຖານ ແລະ ຊະນະການປະມູນ ເປັນເວລາ 1 ປີ.
2) ສຳຫຼັບເຄື່ອງມືຮັບໃຊ້ທີ່ຕິດພັນກັບການບຳລຸງຮັກສາ ເຊັ່ນ : ນ້ຳຢາ, ນ້ຳມັນຄອມ ແລະ ອື່ນໆ ແມ່ນ ບໍລິສັດເປັນຝ່າຍຮັບຜິດຊອບ ແຕ່ລະຄັ້ງທີ່ທຳການບຳລຸງຮັກສາ;
3) ມີການສຳຮອງອາໄຫຼ່ແອເຢັນ ເພື່ອແກ້ໄຂເຫດສຸກເສີນໃຫ້ໄດ້ໄວທີ່ສຸດພາຍໃນ 1-4 ຊົ່ວໂມງ ເປັນຕົ້ນແມ່ນແອຫ້ອງ Server ຂະໜາດ 48.000 BTU ຫາ ຂະໜາດ 120.000 BTU ທີ່ ທຄຕລ ນຳໃຊ້ຢູ່;
4) ຕ້ອງມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ພາຍໃນ 1-2 ຊົ່ວໂມງ ຕະຫຼອດ 24 ຊົ່ວໂມງ;
5) ສຳຫຼັບເຄື່ອງອຸປະກອນອາໄຫຼ່ຕ່າງໆໃນການແກ້ໄຂບັນຫາເວລາເປ່ເພໃຫ້ບໍລິສັດ ຊີ້ແຈງລາຍລະອຽດເປັນລາຍລັກອັກສອນໃຫ້ຄົບຖ້ວນ ຫາ ທຄຕລ ເພື່ອຈະເປັນຜູ້ຈັດຊື້ ສ່ວນບໍລິສັດບຳລຸງຮັກສາຕ້ອງເປັນຜູ້ຕິດຕັ້ງ ແລະ ແກ້ໄຂໃຫ້;

